ຄັນຈັດແຈ່ງແຕ່ງຕັ້ງລະບຽບຣາຊການບ້ານເມືອງສຳເລັດບໍຣະບວນແລ້ວ ພວກເສນາອາມາດຣາຊມຸນຕີທັງຫລາຍ ຈຶ່ງພ້ອມກັນທຳມະຫາໄຊຍາພິເສກ ຖວາຍແກສົມເດັດພຣະຍາຟ້າຫລ້າທໍຣະນີມະຫາຣາດ ເປັນການສລອງມະຫາໄຊຄັ້ງຍິ່ງໃຫຍ່ທີ່ສຸດ ຢູ່ວຽງຈັນ.

ໃນງານສລອງມະຫາໄຊນີ້ ພວກເສນາອາມາດໄດ້ປຸກໂຮງຣາຊພິທີຂຶ້ນແຄມປາກຫ້ວຍປ່າສັກຝ່າຍຕາເວັນຕົກ (ຄືບໍຣິເວນໂຮງຮຽນຊາງທຸກວັນນີ້) ແລ້ວທຳການສລອງມະຫາໄຊ 7 ວັນ 7 ຄືນ ໃນງານນີ້ໄດ້ຂ້າຊ້າງ 10 ໂຕ ງົວ 1.000 ໂຕ ແລະ ຄວາຍ 2.000 ໂຕ ລ້ຼງໄພ່ພົນ.

## ພຣະຣາຊໂອວາດຂອງເຈົ້າຟ້າງຸ່ມ

ຄັນທຳການສລອງໄຊຖ້ວນເຈັດວັນເຈັດຄືນບໍຣະບວນແລ້ວ ສົມເດັດພຣະເຈົ້າຟ້າຫລ້າທໍຣະນີມະຫາຣາດ ຈຶ່ງທົງປະທານພຣະຣາຊໂອວາດສັ່ງສອນເສນາອາມາດທັງຫລາຍ ວ່າ:

*1. ເຈົ້າທັງຫລາຍ ຮັກສາບ້ານເມືອງຢ່າໃຫ້ມີຂ້າລັກຄົນໂຈນ ອັນນຶ່ງຢ່າໃຫ້ຂ້າຟັນກັນ ແມ່ນວ່າອ້ອຍຕົນຜິດກໍດີ ເມັຽຕົນຜິດກໍດີ ເສນາ ແລະ ລູກຄ້າມາຜິດກໍດີ ຕົນຢ່າຫລອນຂ້າຟັນເສັຽ ໃຫ້ຜູ້ອື່ນພິຈາຣະນາດູກ່ອນ ເປັນໂທດອັນຫນັກແທ້ຈິງທຳຕາມເຫດນັ້ນ ໂທດບໍ່ຫນັກຢ່າໄດ້ຂ້າ ທີ່ວ່າໃຫ້ໃສ່ຄອກຂັງໄວ້ ສົມໂທດແລ້ວໃຫ້ປ່ອຍໄປຫາວຽກຫາການ, ສົມບັດອັນຈັກເກີດມາໃນແຜ່ນດິນນີ້ ຄົນມີສົມບັດກໍຈຶ່ງມີ ຄົນບໍ່ມີຄົນ ສົມບັດເຂົ້າຂອງກໍຫາບໍ່ໄດ້ແລ ເຮົາບໍ່ໃຫ້ຂ້າຄົນ ເພື່ອດັ່ງນັ້ນແລ.*

*2. ອັນນຶ່ງ ເຈົ້າທັງຫລາຍ ກໍຢ່າຜິດຢ່າຂ້າກັນ ໃຫ້ພ້ອມກັນດູຂອບບ້ານຂອບເມືອງທັງມວນຕ່າງບ້ານຕ່າງເມືອງ ເຂົາຈັກກະທຳບຽດບຽນບ້ານເມືອງເຮົາ ສິ່ງໃດກໍໃຫ້ເຫັນແຈ້ງ.*

*3. ອັນນຶ່ງ ສອງເດືອນໃດ ໃຫ້ໃຊ້ຄົນເມືອໄຫວ້ສາທາເຮົາຊູບ້ານຊູເມືອງ ໃຫ້ເຮົາຮູ້ອັນຮ້າຍອັນດີສາມປີ ຈຶ່ງໃຫ້ຕົວເຈົ້າທັງຫລາຍຂຶ້ນເມືອໄຫວ້ເຮົາ ເມືອຮອດຊຽງດົງຊຽງທອງຜູ້ນແລ້ວ ເຮົາຈັກໄດ້ບູຊາແຖນຟ້າຄືນ ທັງແຖນຄົມ ແຖນແຕງ ແຖນຊົ້ງ ແຖນເຖືອກ ທັງເຖົ້າເຍີ ເຖົ້າໄລ ແມຍາງາມ ແມມົດທັງເທວະດາ ອັນຮັກສາຜາຕັ້ງ ແລະ ສີບອູ ຫຼລຽ ທັງຫລັກຫມັ້ນທ້າຍອັນ ທັງນາໂຮດຽວ ພູເຂົາກ້າອ້າຍມ້າ ທ້າວຄອງ ຢູ່ຫນອງລຸມພູເຂົາກ້າທັ້ນ ທັງຜາຫລວງກ້ອນຟ້າຢຽມ ທັງກ້ອນກາຍຟ້າ ອັນເຈົ້າລັດສີຫມາຍໄວ້ທີ່ຊຽງດົງຊຽງທອງນັ້ນ ຄັນເມືອຮອດແລ້ວ ເຮົາຈັກໄດ້ບູຊາຜີຟ້າຜີແຖນທັງຫລາຍຝູງນັ້ນ ຄັນເຖິງເດືອນຈຽງ ໃຫ້ຂຶ້ນຊູບ້ານຊູເມືອງ ເດືອນສາມໃຫ້ຮອດເມືອງຊວາ ຄັນໃຜບໍ່ຂຶ້ນ ເຮົາວ່າບໍ່ຊື່ຕໍ່ເຮົາແລ ອັນວ່າໃຫ້ລ້ຽງຟ້າລ້ຽງແຖນ ປູ່ເຈົ້າຟ້າຫລວງໂງ່ມຫາກໄດ້ສັ່ງເຮົາໄວ້ ໃຫ້ເຮົາຮູ້ຈັກຫົວໃຈເຈົ້າຂຸນທັງມວນ ອັນຢູ່ເມືອງລ້ານຊ້າງຜູ້ຊື່ ແລະ ຜູ້ຄົດ ຈາກເຈົ້າແຜ່ນດິນທັ້ນແລປູ່ເຈົ້າຟ້າຫລວງໂງ່ມ ໄດ້ສັ່ງໄວ້ສືບໆມາ ດັ່ງນີ້ແລ.*